# *Mekong River Commission*

P.O. Box 6101, Vientiane 01000, Lao PDR
Telephone: (856-21) 263 263   Facsimile: (856-21) 263 264
Email: mrcs@mrcmekong.org  Website: www.mrcmekong.org



10th Anniversary
5 April 1995 - 5 April 2005


## ບົດອອກຂ່າວ

ຄມສ, ເລກທີ 09/07

## *ຄະນະກຳມາທິການແມ່ນ້ຳຂອງສາກົນໄດ້ຮັບການ ສະໜັບສະໜູນຢ່າງເຂັ້ມແຂງ*

**ວຽງຈັນ, ສປປ ລາວ**
**28 ມິຖຸນາ, 2007**

ຄະນະຜູ້ແທນຈາກ ກຳປູເຈຍ, ສປປ ລາວ, ໄທ ແລະ ຫວຽດນາມ ພ້ອມດ້ວຍ ຄະນະຜູ້ແທນຈາກອົງການ ທີ່ໃຫ້ທຶນສະໜັບສະໜູນ, ອົງການຈັດຕັ້ງຄູ່ຮ່ວມງານ ແລະ ບັນດາທະນະຄານພັດທະນາຕ່າງໆ ໄດ້ຮັບຟັງ ເຖິງຜົນສຳເລັດ ຂອງອົງການແມ່ນ້ຳຂອງສາກົນ (ຄມສ) ທີ່ໄດ້ຮັບທຶນສະໜັບສະໜູນ ຫຼາຍກ່ວາ 23 ລ້ານໂດ ລາສະຫະລັດ ໃນໄລຍະ 12 ເດືອນຜ່ານມາ.

ຜົນສຳເລັດດັ່ງກ່າວແມ່ນໄດ້ຖືກປະກາດ ທີ່ກອງປະຊຸມຜູ້ໃຫ້ທຶນບໍ່ເປັນທາງການ ທີ່ ໄດ້ຈັດຂຶ້ນ ທີ່ນະຄອນຫຼວງ ວຽງຈັນໃນມື້ນີ້ ເຊິ່ງ ປະທານຄະນະກຳມະການຮ່ວມ ສົກປີ 2006/2007, ພະນະທ່ານ ຊິນ ນິນີ ໄດ້ກ່າວ ຕໍ່ບັນດາ ແຂກທີ່ເຂົ້າຮ່ວມວ່າ ການໄດ້ຮັບທຶນຊ່ວຍເຫຼືອທີ່ເຂັ້ມແຂງດັ່ງກ່າວ ຈະຮັບປະກັນເຮັດໃຫ້ ວຽກງານ ບາງໂຄງການ ໄດ້ຮັບການສືບຕໍ່ປະຕິບັດ, ໃນຄະນະທີ່ບາງໂຄງການ ຈະໄດ້ກ້າວເຂົ້າສູ່ບາດກ້າວໃໝ່, ແລະ ຮັບປະກັນ ການຈັດຕັ້ງໂຄງການໃໝ່.

ພະນະທ່ານ ຊິນ ນິນີ ກ່າວວ່າ ກອງປະຊຸມຜູ້ໃຫ້ທຶນບໍ່ເປັນທາງການ ໃນຄັ້ງນີ້ ແມ່ນ ເປັນເຫດການທີ່ສຳຄັນຍິ່ງ ເຊິ່ງຈະເປັນການເປີດໂອກາດໃຫ້ ຄມສ ແລະ ບັນດາອົງການທີ່ໃຫ້ທຶນທີ່ມີຈິດໃຈກ້ວາງຂວາງ ໄດ້ມີການປຶກສາຫາລື ກ່ຽວກັບຈຸດປະສົງ, ເປົ້າໝາຍ ຄວາມສຳເລັດ ແລະ ແຜນການຕ່າງໆ. “ພວກເຮົາຫວັງວ່າ ຈະໄດ້ຮັບ ຄຳແນະ ແລະ ຂໍ້ຄິດເຫັນຕ່າງໆ ຈາກ ບັນດາທ່ານ ທີ່ເຂົ້າຮ່ວມໃນກອງປະຊຸມໃນຄັ້ງນີ້ ແລະ ພວກເຮົາ ຄາດວ່າຈະ ໄດ້ຮັບຜົນປະ ໂຫຍດຈາກ ຄວາມຮູ້ ແລະ ຄວາມຊ່ຽວຊານ ຈາກ ໃນຂະແໜງການ ຕ່າງໆ,” ທ່ານ ກ່າວ, “ການເປີດ ກ້ວາງການແລກ ປ່ຽນຄວາມຄິດເຫັນນີ້ ຈະຊ່ວຍໃຫ້ພວກເຮົາສາມາດປັບປຸງ ສາຍພົວພັນອັນດີ ກັບບັນດາ ຜູ້ໃຫ້ທຶນ ຂອງພວກເຮົາ ແລະ ເພື່ອຮັບປະກັນໃຫ້ມີການ ແລກປ່ຽນຄວາມຄິດເຫັນ.”

ເລີ້ມແຕ່ກອງປະຊຸມຄັ້ງທີ່ຜ່ານມາ, ຄມສ ໄດ້ຮັບຮອງເອົາ ແລະ ຈັດພິມ ແຜນຍຸດທະສາດ 2006/2010 ທີ່ໄດ້ລວມເອົາ ຂໍ້ຄິດເຫັນ ຈາກ ບັນດາອົງການຈັດຕັ້ງທີ່ໃຫ້ທຶນ ກໍ່ຄື ການປະກອບສ່ວນຂອງບັນດາຜູ້ຮ່ວມງານ ໃນຂອບເຂດອ່າງ. ພະນະທ່ານ ຊິນ ນິນິ ກ່າວວ່າ ຄະນະກຳມາທິການແມ່ນ້ຳຂອງສາກົນ ມີຄວາມໝັ້ນໃຈວ່າ ທາງອົງການຈະສາມາດບັນ ລຸເປົ້າໝາຍຍຸດທະສາດ 5 ປີ ທີ່ຕົນໄດ້ຕັ້ງໃວ້. ຫົວຂໍ້ທີ່ນຳມາປຶກສາຫາລືໃນກອງປະຊຸມໃນຄັ້ງນີ້ ຍັງລວມມີການ ປະຕິບັດ ແຜນຍຸດທະສາດ ແລະ ທຶນທີ່ຕ້ອງເພື່ອການປະຕິບັດ ແຜນງານບູລິມະສິດ.

ໃນໄລຍະ 6 ເດືອນທີ່ຜ່ານມາ, ຄມສ ໄດ້ຮັບຜົນປະໂຫຍດ ຈາກ ສອງເຫດການທີ່ສຳຄັນ ເຊິ່ງໄດ້ຊ່ວຍໃຫ້ອົງການ ສາມາດ ກວດສອບວິທີການເຮັດວຽກ, ເປົ້າໝາຍ ແລະ ໂຄງສ້າງຂອງຕົນເອງ ເຊິ່ງ ເຫດການໜຶ່ງແມ່ນ ຈາກການໄດ້ຮັບ ການປະເມີນຜົນແບບເປັນອົງການເອກະລາດ ຂອງ ຄະນະກຳມາະທິການແມ່ນ້ຳຂອງສາກົນ ແລະ ຄະນະກຳມາການ ແມ່ນ້ຳຂອງແຫ່ງຊາດ ແລະ ອີກເຫດການໜຶ່ງກໍ່ແມ່ນ ກອງປະຊຸມສາກົນ ຄມສ ເຊິ່ງໄດ້ຈັດຂື້ນທີ່ ຮ່າໂນ່ຍ, ປະເທດ ຫວຽດນາມ, ໃນລະຫ່ວາງເດືອນເມສາປີນີ້ ເຊິ່ງ ຈຸດປະສົງທີ່ສຳຄັນຂອງກອງປະຊຸມສາກົນດັ່ງກ່າວ ກໍ່ແມ່ນເພື່ອເສີມຂະຫຍາຍ ສະຖານະຂອງ ຄມສ ໃນເຂດແມ່ນ້ຳຂອງ ເຊິ່ງ ກອງປະຊຸມຍົກໃຫ້ເຫັນຂົງເຂດທີ່ຕ້ອງປັບປຸງພາຍໃນອົງການຈັດຕັ້ງ. ກອງປະຊຸມຍັງໄດ້ໃຊ້ເວລາປຶກສາຫາລືກ່ຽວກັບ ຂໍ້ຄິດເຫັນທີ່ຖືກສະເໜີຂື້ນ ໃນກອງປະຊຸມ ແລະ ຂໍ້ຄິດເຫັນຈາການປະເມີນຜົນ.

ກອງປະຊຸມຍັງໄດ້ເນັ້ນເຖິງການເຂົ້າຮ່ວມຢ່າງຫ້າວຫັນຂອງອົງການແມ່ນ້ຳຂອງສາກົນ ໃນໂຄງການຕ່າງໆ ຂອງ GMS, ໂຄງການຮ່ວມມືເພື່ອພັດທະນາແຫຼ່ງນ້ຳໃນເຂດແມ່ນ້ຳຂອງ ແລະ ກິດຈະກຳຮ່ວມມືອື່ນໆ, ຄວາມຄືບ ໜ້າຂອງໂຄງການເພີ່ມການເປັນເຈົ້າຂອງໃນ 4 ປະເທດສະມາຊິກ ຂອງກອງເລຂາ ຄມສ ແລະ ສຶກສາ ຄວາມອາດສາມາດ ໃນການເພີ້ມທຶນ ແລະ ເສີມຂະຫຍາຍສາຍພົວພັນອັນດີກັບບັນດາຜູ້ໃຫ້ທຶນ.


- **ຂໍ້ມູນເພີ້ມເຕີມກະລຸນາຕິດຕໍ່, ທ່ານ ນາງ ເວີຈີເນຍ ແອັດດີສັນ, ພະນັກງານປະຊາສຳພັນ ອົງການແມ່ນ້ຳຂອງສາກົນ.**
- ໂທ: 856 21 263 263 ຕໍ່ 4703. ໂທລະສັບມືຖື: (856) 20 559 9139 ແຟກ: (85621) 263 264
- Email: virginia@mrcmekong.org